**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຂະແໜງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຂະແໜງພະລັງງານ ແລະ ພື້ນຖານໂຄງລ່າງ ເລກທີ 17 /ກຕຊສ.ຂຕພພ

ນະຄອນຫຼວງວຽງຈັນ, ວັນທີ 20.10.2017

**ຮຽນ: ທ່ານ ຫົວໜ້າ ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

**ເລື່ອງ: ລາຍງານຜົນການລົງຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ໃນຊ່ວງໄລຍະດຳເນີນງານ ສຳລັບ ໂຄງການເຂື່ອນໄຟຟ້ານ້ຳຕົກ ນ້ຳຊັນ 3 A ທີ່ເມືອງຄູນ, ແຂວງຊຽງຂວາງ ຂອງ ບໍລິສັດ ພົງຊັບທະວີ ກໍ່ສ້າງ ຂົວທາງ ແລະ ຊົນລະປະທານ ຈຳກັດ**

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ຄຳແນະນຳ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ສະບັບເລກທີ 8030/ກຊສ, ລົງວັນທີ 17/12/2013;
- ອີງຕາມ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ສຳລັບ ໂຄງການເຂື່ອນໄຟຟ້ານ້ຳຕົກ ນ້ຳຊັນ 3 A ສະບັບເລກທີ 6073/ກຊສ, ລົງວັນທີ 05 ກັນຍາ 2012;
- ອີງຕາມ ບົດບັນທຶກ ຜົນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການເຂື່ອນໄຟຟ້ານ້ຳຕົກ ນ້ຳຊັນ 3 A ຄັ້ງວັນທີ 04 ຕຸລາ 2017.

ຂະແໜງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂະແໜງພະລັງງານ ແລະ ພື້ນຖານໂຄງລ່າງ (ຂຕພພ) ຂໍຖືເປັນກຽດຮຽນລາຍງານມາ ຍັງທ່ານ ຊາບວ່າ: ໃນວັນທີ 04 ຕຸລາ 2017 ຄະນະວິຊາການຕິດຕາມກວດກາສິ່ງແວດລ້ອມໂຄງການ ເຊິ່ງນຳພາໂດຍ ທ່ານ ພູວົງ ຫຼວງໄຊຊະນະ ຫົວໜ້າ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ພະແນກ ຊສ ແຂວງຊຽງຂວາງ, ຫ້ອງການ ຊສ ເມືອງຄູນ ແລະ ຜູ້ຕາງໜ້າ ບໍລິສັດ ພົງຊັບທະວີ ກໍ່ສ້າງ ຂົວທາງ ແລະ ຊົນລະປະທານ ຈຳກັດ.

ຈຸດປະສົງໃນການລົງຕິດຕາມກວດກາຄັ້ງນີ້ແມ່ນໄດ້ລົງເບິ່ງເຂດຕົວເຂື່ອນ, ເຂດໂຮງປັ່ນໄຟຟ້າ, ເຂດແຄ້ມພັກ, ຫຼັງຈາກນັ້ນຄະນະວິຊາການ ໄດ້ຈັດກອງປະຊຸມປຶກສາຫາລື ເພື່ອຮັບຟັງການລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນໄລຍະຜ່ານມາຂອງບໍລິສັດ ແລະ ໄດ້ປຶກສາຫາລື ກ່ຽວກັບ ບັນຫາທີ່ເກີດຂຶ້ນ ແລະ ພົບເຫັນໃນເວລາເຄື່ອນໄຫວຕິດຕາມກວດກາ (ຄັດຕິດບົດບັນທຶກມາພ້ອມນີ້).

ຜ່ານການເຄື່ອນໄຫວຕິດຕາມກວດກາ ເຫັນວ່າ ບໍລິສັດ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາມາດຕະການປ້ອງກັນແກ້ໄຂ ແລະ ຫຼຸດຜ່ອນຜົນກະທົບຕາມທີ່ກຳນົດໄວ້ໃນແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ຖືກຮັບຮອງໄປແລ້ວນັ້ນໄດ້ດີສົມຄວນ. ແຕ່ເຖິງຢ່າງໃດກໍ່ຕາມ ຄຽງຄູ່ກັບດ້ານດີນັ້ນກໍ່ຍັງມີບາງກິດຈະກຳ ທີ່ບໍລິສັດ ຕ້ອງໄດ້ເອົາໃຈໃສ່ເພີ່ມເຕີມ ເປັນຕົ້ນ ວຽກງານການອະນາໄມໜ້າອ່າງ

ເກັບນ້ຳທີ່ຍັງເຫັນເສດໄມ້ ແລະ ສິ່ງເສດເຫຼືອຈຳນວນໜຶ່ງທີ່ຍັງຄົງຄ້າງ, ການຕິດຕາມກວດກາຄຸນນະພາບນ້ຳໃນເຂດອ່າງເກັບນ້ຳ-ເຂດລຸ່ມເຂື່ອນ ແລະ ລາຍງານຄວາມຄືບໜ້າ ກ່ຽວກັບ ວຽກງານການຄຸ້ມຄອງສິ່ງແວດລ້ອມໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ ຮັບຊາບ ຢ່າງເປັນປົກກະຕິ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ ດຳເນີນໄປຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິຜົນ, ຂຕພພ ຈຶ່ງໄດ້ຮ່າງບົດປະກອບຄຳເຫັນເຖິງ ບໍລິສັດ ເຊິ່ງໄດ້ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຮັບຊາບ ແລະ ໃຫ້ທິດຊີ້ນຳ ຕາມທາງຄວນດ້ວຍ.

**ຫົວໜ້າຂະແໜງ**

**<u>ເອກະສານຄັດຕິດ</u>**

- ບົດປະກອບຄຳເຫັນ;
- ຂໍ້ມູນສັງລວມຫຍໍ້ໂຄງການ;
- ບົດປະເມີນໂຄງການ;
- ລາຍການກວດສອບ ສຳລັບ ການລົງຕິດຕາມກວດກາ;
- ບົດບັນທຶກ;
- ລາຍຊື່ຜູ້ເຂົ້າຮ່ວມ.